ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 020 /ທຄຕລ...2020...
ນະຄອນຫຼວງວຽງຈັນ, ວັນທີ:...28 FEB 2020...

**<u>ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ</u>**

**ເຖິງ** : ບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງ.

**ເລື່ອງ**: ແຈ້ງເຊີນເຂົ້າຮ່ວມຍື່ນປະມູນສະເໜີລາຄາວຽກງານຕົບແຕ່ງໜ່ວຍບໍລິການດອນໜູນ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍຖືເປັນກຽດແຈ້ງເຊີນມາຍັງບັນດາບໍລິສັດຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ຕົບແຕ່ງກ່ຽວກັບການສະເໜີເງື່ອນໄຂ ແລະ ຂັ້ນຕອນໃນການປະກອບເອກະສານຍື່ນຊອງສະເໜີລາຄາປະເມີນວຽກຕົບແຕ່ງໜ່ວຍບໍລິການດອນໜູນ ຕັ້ງຢູ່ ບ້ານໄຊສະຫວ່າງ, ເມືອງໄຊທານີ ນະຄອນຫຼວງວຽງຈັນ ດັ່ງມີເນື້ອໃນລຸ່ມນີ້:

1. ບໍລິສັດ ສາມາດພົວພັນເອົາເອກະສານປະມູນ ເລີ່ມວັນທີ 02/03/2020, ເວລາ 08:30 - 16:30 ທີ່ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ເກັບຄ່າທໍານຽມເອກະສານ ຈໍານວນເງິນ 250.000 ກີບ, ລາຍລະອຽດເອກກະສານປະກອບມີດັ່ງນີ້:
   ກ. ແບບຟອມການຍື່ນຊອງປະມູນ.
   ຂ. ໃບປະເມີນລາຄາ 1 ຊຸດ.
   ຄ. ແບບຕົບແຕ່ງ 1 ຊຸດ.

2. ສາມາດສອບຖາມລາຍລະອຽດເພີ່ມເຕີມ ກ່ຽວກັບເຕັກນິກການຕົບແຕ່ງກ່ອນການຍື່ນຊອງ ຈາກວັນທີ 02/03/2020 - 25/03/2020, ໃນຊ່ວງເວລາ 8:30 - 11:30 ໂມງ ແລະ 13:30 - 16:00 ໂມງ ທີ່ໝາຍເລກໂທລະສັບ 020 55522448, 020 77467722. ນອກຈາກເວລາດັ່ງກ່າວແລ້ວ ທຄຕລ ຈະຂໍສະຫງວນສິດໃນການຕອບຄໍາຖາມໃດໆ ທັງໝົດ.

3. ການຍື່ນຊອງປະມູນແຍກເປັນ 2 ຊອງ:
   - ຊອງເອກະສານທາງດ້ານເຕັກນິກປະສົບການຜົນງານ, ຖານະການເງິນ ແລະ ວິຊາການ (ຕາມແບບຟອມຄັດຕິດມາພ້ອມ);
   - ຊອງສະເໜີລາຄາ, ມູນຄ່າ ຕາມລາຍການໃນ BOQ.

4. ຍື່ນເອກະສານສະເໜີລາຄາ ພ້ອມທັງເອກະສານດ້ານເຕັກນິກຂອງບໍລິສັດ ແລະ ຫຼັກຖານອື່ນໆ (ຕົ້ນສະບັບ) ມາຍັງພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສໍານັກງານໃຫຍ່ ກ່ອນວັນທີ 25/03/2020 ແລະ ຈະປິດຮັບຊອງກ່ອນເວລາ 09:00 ໂມງ ຂອງວັນດຽວກັນ.

**<u>ເງື່ອນໄຂການປະກອບເອກະສານການປະມູນດັ່ງນີ້:</u>**

**<u>ຊອງທີ 1:</u>**

ກ. ໃບທະບຽນວິສາຫະກິດ

ຂ. ໃບອະນຸຍາດດໍາເນີນທຸລະກິດປີ 2019 ຫຼື 2020

ຄ. ໃບທະບຽນອາກອນ 3 ປີຍ້ອນຫຼັງ (2017, 2018, 2019)

ງ.ໃບຢັ້ງຢືນຖານະການເງິນ ປີ 2019 (ອອກໃຫ້ໂດຍທະນາຄານ)

ຈ. ບັນຊີພາຫະນະຮັບໃຊ້ວຽກ ແລະ ອຸປະກອນຂອງບໍລິສັດ

ສ. ບັນຊີພະນັກງານຄຸ້ມຄອງ ແລະ ວິຊາການຂອງບໍລິສັດ

ຊ. ໃບຢັ້ງຢືນຜົນງານ ແລະ ປະສົບການທີ່ມງານທີ່ມີສີມືສະເພາະດ້ານຕົບແຕ່ງໜ່ວຍບໍລິການ ຫຼື ສາຂາທະນາຄານຢ່າງໜ້ອຍ 4 ໂຄງການ

ລາຍລະອຽດຕາມແບບຟອມທີ່ຕິດຄັດດ້ານຫຼັງ.

**<u>ຊອງທີ 2:</u>**

ກ. ໃບປະເມີນລາຄາຕ້ອງເປັນສະກຸນເງິນກີບທີ່ປະກອບສຳເລັດແລ້ວ 1 ຊຸດ

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາ ບໍລິສັດ ເພື່ອຍື່ນຊອງສະເໜີລາຄາຕາມທີ່ກ່າວມາຂ້າງເທິງນັ້ນດ້ວຍ.

**ຜູ້ອຳນວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ສຸພັກ ຖິ່ນໄຊພອນ